

# 3 ການແນະນຳສຳລັບການສອນພາສາ

ເດັກທີ່ພິການທາງຫູ ຫລື ບໍ່ສາມາດຮັບຟັງໄດ້ດີນັ້ນ ຈະສື່ສານໂດຍການເບິ່ງ. ເຂົາຈະບໍ່ສາມາດຮຽນຮູ້ຄຳສັບໄດ້ຄືກັບຄົນປົກກະຕິ ດ້ວຍການຟັງພຽງແຕ່ຄົນອື່ນເວົ້າ. ເຂົາພຽງແຕ່ຕ້ອງການເວລາ ແລະ ການຊ່ວຍເຫລືອຫລາຍຂຶ້ນໃນການຮຽນຮູ້ພາສາ. ເຖິງຈະແມ່ນການເບິ່ງ ແລະ ຟັງຜູ້ອື່ນລົມກັນ ຫລື ເບິ່ງຄົນອື່ນສະແດງພາສາມືກໍ່ຕາມ. ເຂົາອາດຈະເລີ່ມໃສ່ໃຈຕໍ່ກັບພາສາຂຽນໄວກວ່າເດັກຄົນອື່ນໆ, ເມື່ອເຂົາເຫັນພາສາຂຽນເຊັ່ນ: ຊື່ຂອງຕົນເອງ, ເຂົາກໍ່ຈະສາມາດເຊື່ອມຕໍ່ລະຫວ່າງຄຳ ແລະ ຄວາມໝາຍຂອງມັນໄດ້.

ບັນດາຄຳແນະນຳຕ່າງໆໃນບົດນີ້, ຈະເຮັດໃຫ້ມີຄວາມສະດວກ ແລະ ງ່າຍຂຶ້ນສຳຫລັບ ພໍ່ແມ່ ແລະ ບຸກຄົນອື່ນໆ ໃນການສອນວິທີການໃຊ້ພາສາໃຫ້ແກ່ເດັກ.

## ສື່ສານໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້

ການຊ່ວຍເຫລືອເດັກທີ່ພິການທາງຫູ ໃນການຮຽນຮູ້ພາສານັ້ນ ເປັນສິ່ງສຳຄັນທີ່ສຸດ, ທີ່ຜູ້ເປັນພໍ່ແມ່ ແລະ ບຸກຄົນອື່ນສາມາດເຮັດໄດ້. ໂດຍປົກກະຕິແລ້ວ ຄົນເຮົາຈະບໍ່ໄດ້ເວົ້າກັບເດັກຫລາຍ ເພາະວ່າ ພວກເຂົາຈະສົນໃຈໃນໜ້າວຽກຂອງພວກເຂົາຫລາຍກວ່າ, ແຕ່ລູກຂອງທ່ານແມ່ນຕ້ອງການໃຫ້ທຸກຄົນໃຊ້ຄວາມພະຍາຍາມພິເສດໃນການສື່ສານກັບເຂົາ, ການສື່ສານກັນນັ້ນເປັນພຽງວິທີດຽວທີ່ເຂົາຈະສາມາດຮຽນຮູ້ໄດ້.

ບາງຄັ້ງ ພໍ່ແມ່ ອາດຈະຮູ້ສຶກລະອາຍ ແທນເດັກທີ່ພິການທາງຫູ ຫລື ເດັກອາດຈະຖືກປົກປ້ອງຫລາຍເກີນໄປ. ແຕ່ເດັກພັດຢາກມີສ່ວນຮ່ວມໃນການເຮັດກິດຈະກຳຂອງຄອບຄົວຂອງເຂົາ. ການທີ່ເດັກຖືກປະປ່ອຍໃຫ້ຢູ່ຢ່າງໂດດດ່ຽວນັ້ນ ຈະເປັນການຢຸດການຮຽນຮູ້ຂອງເຂົາໃນຫລາຍໆສິ່ງ.

ໃນໄລຍະເວລາຂອງວັນໜຶ່ງ, ຈົ່ງຊອກຫາໂອກາດທີ່ຈະສື່ສານກັບລູກຂອງທ່ານ, ໃຫ້ເຂົາມີສ່ວນຮ່ວມໃນການເຮັດກິດຈະກຳກັບຄົນອື່ນໆ, ດັ່ງນັ້ນ ເຂົາຈະໄດ້ເຫັນ ແລະ ໄດ້ຍິນການສື່ສານຂອງຄົນໃນແບບຕ່າງໆ. ພ້ອມກັນນັ້ນກໍ່ສົ່ງເສີມໃຫ້ສະມາຊິກທັງໝົດຄອບຄົວເຊັ່ນ: ອ້າຍ, ເອື້ອຍ, ນ້ອງ, ພໍ່ເຖົ້າ, ແມ່ເຖົ້າ ແລະ ຍາດຕິພີ່ນ້ອງຄົນອື່ນໆ ໃຫ້ເຮັດເຊັ່ນດຽວກັນນີ້.




*ເດັກຕ້ອງການມີສ່ວນຮ່ວມໃນກິດຈະກຳຂອງຄອບຄົວ.*

# ຈັດກິດຈະກຳໃຫ້ເໝາະສົມເຂົ້າໃນ ຊີວິດປະຈຳວັນຂອງຄອບຄົວຂອງທ່ານ

ມັນເປັນສິ່ງສຳຄັນຫລາຍທີ່ຈະຄົ້ນຄິດກ່ຽວກັບວິທີ ໃນການຊ່ວຍສົ່ງເສີມພັດທະນາການລູກຂອງທ່ານ, ໃນວິທີທາງທີ່ກາຍເປັນສະຕິສຳລັບຄອບຄົວຂອງທ່ານ ເອງ. ກິດຈະກຳຈຳນວນໜຶ່ງທີ່ຢູ່ໃນປຶ້ມເຫລັ້ມດັ່ງກ່າວ ນີ້ຕ້ອງໃຊ້ເວລາໃນການປະຕິບັດຕົວຈິງ ຫລື ອາດຈະ ເປັນການດັດແປງວິທີທີ່ທ່ານເຄີຍເຮັດເປັນປົກກະຕິ ຜ່ານມາ.

ລູກຂອງທ່ານຈະຮຽນຮູ້ໄດ້ດີກວ່າ ເມື່ອມີການສອນ ໃຫ້ເຂົາມີສ່ວນຮ່ວມໃນກິດຈະກຳປະຈຳວັນ.

- ການເວົ້າ ຫລື ໃຊ້ພາສາມືຕໍ່ລູກຂອງທ່ານໃນຂະ ນະທີ່ເຮັດກິດຈະກຳຮ່ວມກັນເຊັ່ນ: ການຮັບປະ ທານອາຫານ, ການອາບນໍ້າ, ການປ່ຽນເຄື່ອງນຸ່ງ ແລະ ອື່ນໆ. ໄລຍະເວລາດັ່ງກ່າວນັ້ນ ເປັນໄລຍະ ເວລາທີ່ດີໃນການເວົ້າ ຫລື ໃຊ້ພາສາມື ແມ່ນໄລ ຍະເວລາທີ່ທ່ານໄດ້ໃກ້ຊິດກັບລູກຂອງທ່ານ ແລະ ເຂົາເອງກໍ່ໃສ່ໃຈຕໍ່ທ່ານເປັນປົກກະຕິ.




*ແມ່ຂອງນາງອານິດາ ກຳລັງໃຊ້ພາສາສັນຍະ ລັກໃນການສື່ສານກັບເດັກ.*

- ໃນການພັນລະນາກ່ຽວກັບສິ່ງທີ່ທ່ານເຮັດນັ້ນ, ຈົ່ງໃຊ້ຄຳສັບ ຫລື ສັນຍະລັກໃຫ້ຄືກັນ ໃນເມື່ອມັນ ແມ່ນສິ່ງດຽວກັນໃນແຕ່ລະຄັ້ງ, ມັນຈະຊ່ວຍໃຫ້ ລູກຂອງທ່ານຮຽນຮູ້ຄວາມໝາຍຂອງສັນຍະລັກ ແລະ ຄຳສັບດັ່ງກ່າວ ແລະຍັງຈະຊ່ວຍໃຫ້ເຂົາສາ ມາດນຳໃຊ້ບັນດາສັນຍະລັກ ແລະ ຄຳສັບດັ່ງ ກ່າວນັ້ນອີກດ້ວຍ.







*ແມ່ຂອງນາງຄຳມະນີ ກຳລັງໃຊ້ພາສາມືໃນການສື່ສານ.*

- ຈົ່ງເອົາລູກຂອງທ່ານຢູ່ນຳໃຫ້ຫລາຍເທົ່າທີ່ຈະເປັນ ໄປໄດ້ໃນຂະນະທີ່ທ່ານເຮັດວຽກ ແລະ ພະຍາ ຍາມໃຊ້ຄຳເວົ້າທີ່ສັ້ນໃນການພັນລະນາກ່ຽວກັບ ສິ່ງທີ່ທ່ານກຳລັງເຮັດຢູ່.

• ເວົ້າ ແລະ ສະແດງສັນຍະລັກກ່ຽວກັບສິ່ງທີ່ທ່ານ ຄິດວ່າ ລູກຂອງທ່ານໄດ້ເຫັນ, ກະທຳ ຫລື ຮູ້ສຶກ. ໂດຍການສົມມຸດວ່າທ່ານແມ່ນຕົວເຂົາ.




*ພີ່ນ້ອງຂອງ ທ້າວ ຄຳແກ້ວ ກຳລັງໃຊ້ຄຳເວົ້າ ແລະ ການສະແດງສີໜ້າໃນການສື່ສານ.*

• ຕິດຕາມຄວາມສົນໃຈຂອງເດັກ, ແລະ ເຮັດກິດຈະກຳຂຶ້ນໂດຍການໃຊ້ສິ່ງທີ່ລູກຂອງທ່ານສົນໃຈ.




## ອີງຕາມສະພາບຄວາມເປັນຈິງ

• ຈົ່ງພະຍາຍາມໃຫ້ຮູ້ເຖິງຄວາມເປັນຈິງກ່ຽວກັບທ່ານ ແລະ ບຸກຄົນອື່ນທີ່ສາມາດໃຊ້ເວລາຫຼິ້ນກັບລູກຂອງທ່ານນັ້ນວ່າ ຫລາຍພຽງໃດ.

• ພະຍາຍາມປັບກິດຈະກຳໃຫ້ເໝາະສົມ, ຈະເຮັດໃຫ້ພວກເຂົາສາມາດປັບຕົວເຂົ້າກັບຊີວິດປະຈຳວັນຂອງທ່ານໄດ້ຢ່າງງ່າຍດາຍ ແລະ ໃຊ້ເວລາໜ້ອຍລົງ.




• ຈົ່ງພະຍາຍາມເຮັດໃຫ້ແຍກກິດຈະກຳ ຫລື ສິ່ງທີ່ໃຫຍ່ ແລະຍາວອອກໃຫ້ເປັນພາກສ່ວນນ້ອຍໆ, ມີຂັ້ນຕອນເຮັດທີ່ງ່າຍຂຶ້ນ. ວິທີນີ້ ທ່ານຈະໄດ້ຮັບຜົນ ແລະ ຈະບໍ່ເຮັດໃຫ້ທໍ້ໃຈ.



# ມີຫລາຍຄົນສາມາດຊ່ວຍເຮັດກິດຈະກຳເຫລົ່ານີ້ໄດ້

ເດັກທຸກຄົນລ້ວນແຕ່ຕ້ອງການດູແລ ແລະ ຄວາມຮັກຈາກພໍ່ແມ່ຂອງພວກເຂົາ, ບໍ່ແມ່ນພຽງແຕ່ພໍ່ແມ່ຜູ້ດຽວທີ່ສາມາດເປັນຄູສອນໃຫ້ເດັກໄດ້, ສະນັ້ນ ຄວນຈະໃຫ້ໝູ່ເພື່ອນ, ເພື່ອນບ້ານ ແລະ ສະມາຊິກຄອບຄົວຜູ້ອື່ນໆ ມີສ່ວນຮ່ວມໃນການຊ່ວຍເຫລືອນຳ. ການທີ່ໄດ້ຮູ້ຈັກກັບຄົນພິການທາງຫູຜູ້ທີ່ໃຊ້ພາສາສັນຍະລັກໃນທ້ອງຖິ່ນນັ້ນ, ມັນມີຄວາມສຳຄັນເປັນພິເສດສຳລັບເດັກຜູ້ທີ່ພິການທາງຫູ ຫລື ບໍ່ສາມາດຮັບຟັງໄດ້ດີທີ່ມີຫລາຍໆຄົນມາຮ່ວມເຮັດກິດຈະກຳນຳເຂົາ ເພາະວ່າ:

- ມັນຈະຊ່ວຍໃຫ້ເຂົາຮຽນຮູ້ການສື່ສານກັບຄົນອື່ນລວມທັງຄົນພິການທາງຫູອີກດ້ວຍ.
- ເຂົາຈະຮຽນຮູ້ປັບຕົວເຂົ້າກັບປະເພດຄົນຕ່າງໆ.
- ຄົນອື່ນຈະຮຽນຮູ້ວິທີທີ່ຈະປະຕິສຳພັນກັບເດັກພິການທາງຫູ.

ບາງຄົນ, ແມ່ນແຕ່ສະມາຊິກທີ່ໃກ້ຊິດຢູ່ໃນຄອບຄົວບາງຄັ້ງຄາວແມ່ນບໍ່ຢາກໃຊ້ຊີວິດຢູ່ກັບຄົນພິການທາງຫູເລີຍ. ຫລື ບຸກຄົນອື່ນ ຖ້າພວກເຂົາຫາກຢາກຊ່ວຍເຫລືອແຕ່ບໍ່ຮູ້ວ່າ ຈະເຮັດແນວໃດ. ທ່ານສາມາດເຮັດໃຫ້ພວກເຂົາຮຽນຮູ້ກ່ຽວກັບຄວາມພິການທາງຫູ ແລະ ການທີ່ພິການທາງຫູນັ້ນ ມີຄວາມຫຍຸ້ງຍາກຫລາຍສໍ່າໃດໃນການຮຽນພາສາ. ພວກເຂົາອາດຈະມີຄວາມສະດວກຍິ່ງຂຶ້ນ ຖ້າຫາກພວກເຂົາຮູ້ວ່າ ຄວນຈະເຮັດແນວໃດ.

ຈົ່ງເລົ່າ ແລະ ແບ່ງປັນປະສົບການຂອງທ່ານວ່າ ມີຫຍັງແດ່ທີ່ທ່ານໄດ້ຮຽນຮູ້ກ່ຽວກັບບັນຫາໃນການຟັງ, ບັນດາກິດຈະກຳທີ່ທ່ານ ແລະ ລູກຂອງທ່ານໄດ້ເຮັດຮ່ວມກັນ ແລະ ເຫດຜົນຕ່າງໆ ທີ່ເຮັດກິດຈະກຳເຫລົ່ານັ້ນໃຫ້ແກ່ຜູ້ອື່ນໄດ້ຮັບຟັງ.




*ພໍ່ແມ່ຜູ້ທີ່ມີລູກເປັນຄົນຫູໜວດ ຫຼື ຫູຕຶງນັ້ນ ສາມາດປຶກສາຫາລືຮ່ວມກັນ ໃນການແກ້ໄຂບັນຫາໄດ້.*

# ປຶກສາຫາລືກັບຄອບຄົວຂອງທ່ານ

ທຸກຄົນໃນຄອບຄົວມີບົດບາດແຕກຕ່າງກັນຕໍ່ຊີວິດຂອງເດັກ. ແຕ່ລະຄົນລ້ວນແຕ່ເປັນຫ່ວງເປັນໄຍເດັກ, ໂດຍສະເພາະໃນຄວາມຕ້ອງການອັນພິເສດອັນໃດອັນໜຶ່ງນັ້ນ, ພວກເຂົາອາດມີແນວຄວາມຄິດທີ່ແຕກຕ່າງກັນ ກ່ຽວກັບວິທີທາງທີ່ດີທີ່ສຸດ ໃນການຕອບສະໜອງ ແລະ ຊ່ວຍເຫລືອເດັກຄົນນັ້ນ. ມັນມີຄວາມສຳຄັນເປັນຢ່າງຍິ່ງ ສຳລັບບັນດາບຸກຄົນທີ່ມີຄວາມເປັນຫ່ວງຕໍ່ເດັກ ທີ່ຈະຊອກຫາເວລາໃນການປຶກສາກັນ ແລະ ທຳຄວາມເຂົ້າໃຈຕໍ່ບັນດາແນວຄວາມຄິດຂອງແຕ່ລະຄົນ. ແລະ ຖ້າບຸກຄົນຜູ້ໃດຜູ້ໜຶ່ງຫາກຮູ້ສຶກເມື່ອຍລ້າ ຫລື ໝົດກຳລັງໃຈ ບຸກຄົນອື່ນກໍ່ສາມາດຊ່ວຍໄດ້.




# ຂໍຄວາມຊ່ວຍເຫລືອຈາກຄົນອື່ນ

ຜູ້ທີ່ເປັນພໍ່ແມ່ສາມາດຂໍຮ້ອງສະມາຊິກໃນຊຸມຊົນ ຫລື ເພື່ອນບ້ານໃຫ້ຊ່ວຍເຫລືອເບິ່ງແຍງເດັກທີ່ພິການທາງຫູໄດ້.

ພົບປະກັບເດັກທີ່ພິການທາງຫູທີ່ຢູ່ໃນຊຸມຊົນຂອງທ່ານ, ຜູ້ໃຫຍ່ທີ່ພິການທາງຫູນັ້ນຄົງຈະຈື່ໄດ້ດີວ່າ ມັນມີຄວາມຮູ້ສຶກແນວໃດໃນການທີ່ເປັນເດັກພິການທາງຫູ. ແລະ ພວກເຂົາອາດຈະມີຄວາມສຸກທີ່ໄດ້ຊ່ວຍເຫລືອຄອບຄົວຂອງທ່ານ ແລະ ລູກຂອງທ່ານ.

ຄົນທີ່ຮັບຟັງໄດ້ເປັນປົກກະຕິ ຜູ້ທີ່ສາມາດໃຊ້ພາສາມືນັ້ນ ອາດສາມາດຊ່ວຍໃຫ້ທ່ານສາມາດສື່ສານກັບຜູ້ໃຫຍ່ທີ່ພິການທາງຫູໄດ້ ຖ້າທ່ານຫາກບໍ່ຮູ້ຈັກພາສາມື.

ປຶກສາກັບຜູ້ທີ່ເຮັດວຽກກ່ຽວກັບສຸຂະພາບ, ອາຈານປະຈຳໂຮງຮຽນ ຫລື ຜູ້ທີ່ສອນເດັກພິການທາງຫູ. ວິທີດັ່ງກ່າວນີ້ຈະສາມາດຊ່ວຍໄດ້ຫລາຍ ໂດຍສະເພາະແມ່ນໃນກໍລະນີທີ່ລູກຂອງທ່ານບໍ່ມີການຮຽນຮູ້ທັກສະໃໝ່ໆ ຫລັງຈາກຫຼາຍເດືອນຜ່ານໄປ.






## ເດັກສາມາດຊ່ວຍເຮັດກ່ຽວກັບກິດຈະກຳເຫຼົ່ານີ້ໄດ້

ເດັກສາມາດຊ່ວຍໄດ້ຫຼາຍ. ເຊັ່ນໂດຍປົກກະຕິແລ້ວ ອ້າຍ ຫຼື ນ້ອງ, ເອື້ອຍ ຫຼື ນ້ອງສາວ ແລະ ໝູ່ເພື່ອນຄົນອື່ນໆຂອງເດັກທີ່ພິການທາງຫູນັ້ນ ຈະຮຽນຮູ້ພາສາສັນຍະລັກໄດ້ຢ່າງວ່ອງໄວຫຼາຍ, ຈົ່ງໃຫ້ເດັກທີ່ພິການທາງຫູນັ້ນ ມີສ່ວນຮ່ວມໃນບັນດາກິດຈະກຳເຫຼົ່ານີ້ເທົ່າທີ່ຈະຫຼາຍໄດ້.



*ເດັກມີອາຍຸຫຼາຍກວ່ານັ້ນ ຈະກາຍເປັນຄູແບບອັດຕະໂນມັດ ສະເໝີ ແລະ ເຂົາກໍ່ມີຄວາມສຸກໃນການເຮັດກິດຈະກຳກັບເດັກທີ່ມີອາຍຸອ່ອນກວ່າ.*

ເດັກທີ່ມີອາຍຸອ່ອນກວ່າສາມາດຮ່ວມກິດຈະກຳຕ່າງໆໄດ້ ແລະ ເດັກຜູ້ທີ່ມີອາຍຸສູງກວ່າສາມາດທີ່ຈະກາຍເປັນຄູສອນໄດ້, ຖ້າພວກເຂົາຫາກມີການສະແດງໃຫ້ເດັກທີ່ມີອາຍຸອ່ອນກວ່າ ນັ້ນເບິ່ງວ່າເຮັດແນວໃດກ່ອນ ແລະ ພວກເຂົາກໍ່ຍັງສາມາດສອນທັກສະອື່ນໆໃຫ້ແກ່ເດັກທີ່ພິການທາງຫູໄດ້ ແລະ ເຮັດໃຫ້ເດັກທີ່ພິການນັ້ນ ມີສ່ວນຮ່ວມໃນການຫຼິ້ນເກມຂອງພວກເຂົາ, ນີ້ຈະຊ່ວຍໃຫ້ເຂົາສາມາດສ້າງໝູ່ເພື່ອນ ແລະ ຮຽນຮູ້ທີ່ຈະປະພຶດຕໍ່ຜູ້ອື່ນນັ້ນແນວໃດອີກດ້ວຍ ແລະ ມັນຍັງຈະຊ່ວຍໃຫ້ເດັກທີ່ເປັນປົກກະຕິນັ້ນຮຽນຮູ້ກ່ຽວກັບຄວາມພິການທາງຫູ ແລະ ວິທີການສື່ສານກັບເດັກທີ່ຫູໜວກອີກດ້ວຍ.

# ຄຳແນະນຳສຳລັບການຊ່ວຍເຫຼືອເດັກໃຫ້ມີການຮຽນຮູ້

## ໃຫ້ລູກຂອງທ່ານເປັນຜູ້ນຳພາເຮັດ

ເດັກມັກສະແຫວງຫາໃນການຮຽນຮູ້ທີ່ສຸດ, ຖ້າພວກເຂົາໄດ້ເຮັດສິ່ງໃດສິ່ງໜຶ່ງທີ່ພວກເຂົາມັກ. ຖ້າລູກຂອງທ່ານຫາກມີຄວາມສົນໃຈໃນສິ່ງໃດສິ່ງໜຶ່ງ ຫຼື ມັກຫຼິ້ນກັບເຄື່ອງຫຼິ້ນຊິ້ນພິເສດໃດໜຶ່ງ, ຈົ່ງໃຊ້ໂອກາດດັ່ງກ່າວຊ່ວຍເຫຼືອພັດທະນາທາງດ້ານການຮຽນຮູ້ ແລະ ທັກສະການສື່ສານຂອງເຂົາ.

ໃຫ້ລູກຂອງທ່ານນຳພາເຮັດກິດຈະກຳມັນຈະຊ່ວຍຮັກສາຄວາມໃສ່ໃຈຂອງເຂົາ ແລະ ຊ່ວຍໃຫ້ເດັກໄດ້ຮຽນຮູ້ວ່າ ການຕັດສິນໃຈຂອງເຂົານັ້ນແມ່ນມີຄວາມສຳຄັນ ແລະ ເດັກຈະຮູ້ອີກວ່າ ເຂົາໄດ້ມີສ່ວນໃນການຄວບຄຸມໃນສິ່ງທີ່ເກີດຂຶ້ນ. ນີ້ມີຄວາມສຳຄັນຫຼາຍໂດຍສະເພາະແມ່ນຕໍ່ກັບແມ່ຍິງ. ຫຼາຍໆແຫ່ງໃນໂລກທີ່ຄາດຫວັງໃຫ້ຜູ້ຍິງຕ້ອງເປັນຄົນທີ່ມີດຽບ ແລະ ເຮັດຕາມຄຳສັ່ງພຽງຢ່າງດຽວເທົ່ານັ້ນ. ການທີ່ໄດ້ຊ່ວຍເຫຼືອແມ່ຍິງໄດ້ຕັດສິນໃຈ ແລະ ເຮັດຕາມແນວຄວາມຄິດຂອງພວກເຂົານັ້ນ ສາມາດເຮັດໃຫ້ເຂົາມີຄວາມໝັ້ນໃຈ ແລະ ຄວາມສາມາດຫຼາຍຂຶ້ນ.

ການທີ່ທ່ານປ່ອຍໃຫ້ລູກຂອງທ່ານນຳພາເຮັດກິດຈະກຳນັ້ນ, ກໍ່ບໍ່ໄດ້ໝາຍຄວາມວ່າ ທ່ານຈະອະນຸຍາດໃຫ້ເຂົາປະພຶດໄປໃນທາງທີ່ບໍ່ດີ ຫຼື ເຮັດໃຫ້ເຂົາຕົກຢູ່ໃນສະຖານະການທີ່ອັນຕະລາຍ. ສະນັ້ນ ການໃຫ້ຄຳແນະນຳແກ່ພວກເຂົານັ້ນມີຄວາມສຳຄັນຫຼາຍ ແລະ ຄວາມຮູ້ທີ່ທ່ານມີກ່ຽວກັບຄວາມຕ້ອງການ, ຄວາມສາມາດທາງດ້ານພາສາຂອງເຂົາ ຈະສາມາດຊ່ວຍທ່ານໃຫ້ການແນະນຳໃນການຫຼິ້ນທີ່ເຮັດໃຫ້ເຂົາມີການຮຽນຮູ້ໄດ້.



## ການເຮັດໃຫ້ການສື່ສານສະໜຸກສະໜານ ແລະ ມີຜົນປະໂຫຍດ

ເດັກຈະມ່ວນຊື່ນກັບການສື່ສານ ເມື່ອພວກເຂົາມີສິ່ງທີ່ເປັນຂອງຈິງໃນການເຮັດສັນຍະລັກ ຫຼື ເວົ້າກ່ຽວກັບສິ່ງນັ້ນ, ເຊິ່ງອາດຈະເປັນສິ່ງທີ່ຄົນເຮົາເຮັດສັນຍະລັກໃຫ້ ແລະ ເວົ້າກ່ຽວກັບມັນ. ຈົ່ງໃຫ້ໂອກາດແກ່ລູກຂອງທ່ານໃນການຮຽນຮູ້ກ່ຽວກັບໂລກ ແລະ ກະຕຸ້ນໃຫ້ເຂົາເຮັດສັນຍະລັກ ຫຼື ເວົ້າກ່ຽວກັບສິ່ງທີ່ເຂົາກຳລັງເຮັດຢູ່ນັ້ນ. ການສົນທະນາກັບລູກຂອງທ່ານຈະຊ່ວຍໃຫ້ເຂົາຮຽນຮູ້ໄດ້ໄວຂຶ້ນກວ່າເກົ່າ, ພຽງແຕ່ທ່ານບອກເຂົາໃຫ້ຈື່ ແລະ ເວົ້າຄືນກ່ຽວກັບເຄື່ອງໝາຍ ແລະ ຄຳສັບຕ່າງໆນັ້ນ.




## ໃຫ້ລູກຂອງທ່ານຊ່ວຍໃນການເຮັດວຽກງານ

ໃຫ້ລູກຂອງທ່ານເຮັດຊ່ວຍເຮັດວຽກງານຂອງທ່ານ, ສື່ສານກັບເຂົາກ່ຽວກັບສິ່ງທີ່ພວກທ່ານກຳລັງເຮັດຢູ່ນັ້ນ ໂດຍມີການໃຊ້ຄຳສັບ ຫຼື ສັນຍະລັກເພື່ອບອກໃຫ້ເຂົາຊ່ວຍທ່ານເຮັດສິ່ງໃດສິ່ງໜຶ່ງເຊັ່ນ: ໄປເອົາເຄື່ອງມືມາໃຫ້ທ່ານ ຫຼື ຊ່ວຍໃນວິທີອື່ນໆ. ລູກຂອງທ່ານຈະມີຄວາມສົນໃຈຫຼາຍຂຶ້ນໃນການໃສ່ໃຈ ແລະ ການສື່ສານໃນຂະນະທີ່ເຂົາກຳລັງຊ່ວຍທ່ານເຮັດສິ່ງໃດສິ່ງໜຶ່ງຢູ່ນັ້ນ, ຖືວ່າທ່ານຈະມີຜົນປະໂຫຍດທັງສອງສິ້ນ.

## ສ້າງຄວາມໃສ່ໃຈລູກຂອງທ່ານ ກ່ອນທີ່ທ່ານຈະສື່ສານກັບເຂົາ

ເດັກຜູ້ທີ່ບໍ່ສາມາດຮັບຟັງໄດ້ດີນັ້ນ ຕ້ອງການທີ່ຈະສັງເກດຮີມສົບຂອງທ່ານເຄື່ອນເໜັງ, ສັງເກດພາສາມື ຫຼື ພາສາສັນຍະລັກຂອງທ່ານໃນການສື່ສານກັບຕົວທ່ານ. ເຂົາຍັງສາມາດໄດ້ຂໍ້ມູນຫຼາຍຢ່າງຈາກການສັງເກດເບິ່ງການສະແດງສີໜ້າຂອງທ່ານ. ສະນັ້ນ ມັນສຳຄັນຫຼາຍທີ່ຈະລໍຖ້າຈົນກວ່າເຂົາຫລຽວເບິ່ງໃບໜ້າຂອງທ່ານ ກ່ອນທີ່ທ່ານຈະເລີ່ມເວົ້າ ຫຼື ສະແດງພາສາມືເຂົ້າໃນການສື່ສານກັບເດັກນັ້ນ.

ໃນການທີ່ຈະດຶງດູດຄວາມໃສ່ໃຈຂອງເດັກນັ້ນ, ຈົ່ງພະຍາຍາມເຄື່ອນຍ້າຍ ຫຼື ແກວ່ງມືຂອງທ່ານ ໃນບ່ອນທີ່ເຂົາສາມາດສັງເກດເຫັນໄດ້, ເອີ້ນຊື່ຂອງເຂົາ, ສຳຜັດເຂົາ ຫຼື ຕີວັດຖຸທີ່ຢູ່ໃກ້ເຮັດໃຫ້ເກີດສຽງດັງ ເພື່ອທີ່ເດັກສາມາດຮັບຮູ້ເຖິງການສັ່ນສະເທືອນນັ້ນ.



*ອ້າຍຂອງ ທ້າວກຳແພງ ກຳລັງໃຊ້ມືສຳຜັດ ເພື່ອດຶງດູດຄວາມສົນໃຈຂອງລາວ.*

## ວິທີຕ່າງໆໃນການດຶງດູດຄວາມໃສ່ໃຈລູກຂອງທ່ານ

ຖ້າລູກຂອງທ່ານຫາກມີຄວາມສົນໃຈຕໍ່ສິ່ງວັດຖຸໃດໜຶ່ງຫຼາຍກວ່າໃນສິ່ງທີ່ທ່ານກຳລັງສື່ສານຢູ່ນັ້ນ. ທ່ານສາມາດດຶງດູດຄວາມສົນໃຈລູກຂອງທ່ານໄດ້ ດ້ວຍການຢຸດການກະທຳທຸກຢ່າງ ແລ້ວນຳເອົາວັດຖຸດັ່ງກ່າວນັ້ນ ມາໃກ້ກັບໃບໜ້າຂອງທ່ານ ຫຼື ໃຊ້ພາສາມື ຫຼື ສັນຍະລັກໃກ້ກັບວັດຖຸນັ້ນ.

- ຢຸດການກະທຳທັງໝົດ. ຖ້າທ່ານຫາກຢຸດການເຄື່ອນໄຫວທັງໝົດແລ້ວ, ໂດຍສະເພາະແມ່ນວັດຖຸໃດໜຶ່ງທີ່ຢູ່ໃນມືຂອງທ່ານນັ້ນ. ເຊິ່ງອາດຈະເຮັດໃຫ້ລູກຂອງທ່ານຫລຽວເບິ່ງທ່ານວ່າ: ຍ້ອນຫຍັງທ່ານຈຶ່ງຢຸດ.
- ນຳເອົາວັດຖຸທີ່ເຂົາສົນໃຈນັ້ນມາໃກ້ກັບໃບໜ້າຂອງທ່ານ. ເພື່ອເປັນການເຮັດໃຫ້ເດັກສາມາດເບິ່ງເຫັນໃບໜ້າຂອງທ່ານໄດ້ ແລະ ກໍ່ໃຊ້ວັດຖຸດັ່ງກ່າວນັ້ນເຮັດຄືເກົ່າ. (ຖ້າທ່ານຫາກຕ້ອງການໃຫ້ເດັກສັງເກດເບິ່ງຮິມສົບຂອງທ່ານ.)
- ຊີ້ມືໃສ່ ຫຼື ເຮັດສັນຍະລັກໃກ້ກັບວັດຖຸນັ້ນ (ຖ້າທ່ານຫາກຕ້ອງການໃຫ້ເຂົາຮຽນຮູ້ສັນຍະລັກສຳລັບວັດຖຸນັ້ນ)

ຕອນທຳອິດ, ມັນຫຍຸ້ງຍາກຫຼາຍທີ່ຈະຈົດຈຳວ່າ ຈະດຶງດູດຄວາມສົນໃຈທັງໝົດຂອງລູກທ່ານນັ້ນໄດ້ແນວໃດ, ກ່ອນທີ່ທ່ານຈະເລີ່ມສື່ສານກັບເຂົານັ້ນ. ແຕ່ມັນກໍ່ຈະງ່າຍຂຶ້ນ ເມື່ອໄດ້ມີການເຝິກຊ້ອມ.




*ໃນການດຶງດູດຄວາມສົນໃຈຂອງລາວ, ເອື້ອຍ ຂອງ ທ້າວ ສາຍຝົນ ກຳລັງເຮັດສັນຍະລັກໃກ້ກັບເຄື່ອງຫຼິ້ນຂອງລາວ.*

## ສະແດງສັນຍະລັກ ຫຼື ເວົ້າເຊິ່ງໜ້າໃນລະດັບສາຍຕາທີ່ພຽງກັນ

ລູກຂອງທ່ານຈະສາມາດເຂົ້າໃຈໄດ້ຫຼາຍຂຶ້ນໃນສິ່ງທີ່ທ່ານເວົ້າ ຫຼື ສັນຍະລັກນັ້ນ, ຖ້າທ່ານຫາກຄູ້ເຂົ່າລົງໃຫ້ໃກ້ກັບເຂົາ (ພາຍໃນ 1 ແມັດ) ແລະ ເບິ່ງໄປທີ່ໃບໜ້າຂອງເຂົາໃນຂະນະທີ່ທ່ານເວົ້າ ຫຼື ສະແດງສັນຍະລັກ.

ຖ້າເປັນໄປໄດ້, ແມ່ນພະຍາຍາມໃຫ້ມີແສງຈາກຕາເວັນ ແສງຂອງໂຄມໄຟສ່ອງໃສ່ໃບໜ້າຂອງທ່ານ. ແຕ່ຫາກບໍ່ແມ່ນສ່ອງມາທາງເບື້ອງຫຼັງຂອງທ່ານ, ເພາະວ່າ ເມື່ອແສງສ່ອງມາທາງເບື້ອງຫຼັງຂອງທ່ານ ຈະເຮັດໃຫ້ມື ແລະ ໃບໜ້າຂອງທ່ານເປັນເງົາ ເຊິ່ງຍາກທີ່ຈະສັງເກດເຫັນໄດ້.




*ແມ່ຂອງ ນາງ ມີນາ ກຳລັງຫຼິ້ນເກມຕົບມືກັບລູກສາວຂອງລາວ.*

มັນຈະງ່າຍຂຶ້ນສຳລັບລູກຂອງທ່ານໃນການທີ່ຈະເຂົ້າໃຈໃນພາສາຄຳເວົ້າ, ຖ້າຫາກວ່າທ່ານເວົ້າຢ່າງເປັນທຳມະຊາດ ແລະ ມີນ້ຳສຽງທີ່ຈະແຈ້ງ, ບໍ່ໃຫ້ຮ້ອງໃສ່, ເພາະວ່າ ການຮ້ອງໃສ່ນັ້ນ ມັນຈະເຮັດໃຫ້ຄຳເວົ້ານັ້ນຍາກທີ່ຈະເຂົ້າໃຈ. ພະຍາຍາມເວົ້າເປັນປະໂຫຍກທີ່ສັ້ນ ແລະ ທຳມະດາ. ສະນັ້ນ ທ່ານຈຶ່ງຈະບໍ່ເຮັດໃຫ້ເຂົາສັບສົນ ແລະ ມັນຈະງ່າຍຂຶ້ນສຳລັບລູກຂອງທ່ານໃນການສັງເກດການເຄື່ອນເໜັງຮີມສົບຂອງທ່ານໃນຂະນະທີ່ເວົ້າ.




## ຖ້າລູກຂອງທ່ານຫາກສາມາດໄດ້ຍິນສ່ວນໃດສ່ວນໜຶ່ງ

ຄຳແນະນຳເຫຼົ່ານີ້ ອາດຈະຊ່ວຍໃຫ້ເຂົາໄດ້ຍິນດີຂຶ້ນຕື່ມເລັກໜ້ອຍ.



- ຫຸບມືເຂົ້າ ແລະ ວາງໄວ້ເບື້ອງຫຼັງຂອງຫູ ເຊິ່ງເປັນການເຮັດໃຫ້ສຽງຜ່ານເຂົ້າມາຜ່ານຫູໃຫ້ຫຼາຍຂຶ້ນ.

- ເວົ້າໃກ້ກັບຫູຂອງເດັກ, ວິທີນີ້ຈະຊ່ວຍໃຫ້ສຽງດັງຂຶ້ນ ແລະ ຫຼຸດຜ່ອນສຽງລົບກວນຈາກສິ່ງແວດລ້ອມອ້ອມຂ້າງໄດ້. ແຕ່ຕ້ອງເຂົ້າໃຈສະເໝີວ່າ ເຂົາຕ້ອງການທີ່ຈະສັງເກດໃບໜ້າຂອງທ່ານ ໃນເວລາທີ່ທ່ານກຳລັງເວົ້າກັບເຂົານັ້ນ.



# ການໃຊ້ພາສາມື, ການສຳຜັດ ແລະ ການສະແດງສີໜ້າ

ທຸກຄົນລ້ວນແຕ່ເຄື່ອນໄຫວທາງດ້ານຮ່າງກາຍ, ການສຳຜັດ ແລະ ການສະແດງສີໜ້າ ເພື່ອຊ່ວຍໃຫ້ຄົນອື່ນເຂົ້າໃຈວ່າ ພວກເຂົາຕ້ອງການເວົ້າຫຍັງ, ເດັກກໍ່ມັກໃຊ້ການສຳຜັດສະເໝີໃນການສື່ສານກັບຄົນອື່ນ. ສຳລັບເດັກພິການທາງຫູຄົ້ນພົບວ່າ ການສຳຜັດມີຜົນປະໂຫຍດສູງທີ່ສຸດສຳລັບພວກເຂົາ, ເພາະວ່າ ການສຳຜັດຈະຊ່ວຍສື່ສານເຖິງຄວາມຫ່ວງໃຍ ແລະ ຄວາມຜູກພັນ ເຊິ່ງບໍ່ມີສິ່ງໃດສາມາດເຮັດໄດ້. ບາງຄັ້ງ ການເຄື່ອນໄຫວ ແລະ ການເບິ່ງກໍ່ສາມາດໃຊ້ແທນຄຳສັບ ຫຼື ສັນຍະລັກໄດ້, ຕໍ່ມາພວກເຂົາອາດຈະຕື່ມຂໍ້ມູນໃສ່ບັນດາຄຳເວົ້າ ແລະ ສັນຍະລັກເຫຼົ່ານັ້ນ.

ຈົ່ງຊ່ວຍເຫຼືອລູກຂອງທ່ານດ້ວຍການໃຊ້ການເຄື່ອນໄຫວ ແລະ ການສະແດງສີໜ້າຂອງທ່ານ ໃນການສື່ສານໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້, ກ່ອນອື່ນ ພະຍາຍາມສັງເກດເບິ່ງວ່າ ທ່ານມີຄວາມພ້ອມພຽງໃດໃນການເຮັດສິ່ງດັ່ງກ່າວ, ຕໍ່ຈາກນັ້ນ ກໍ່ຊອກຫາວິທີທາງວ່າທ່ານຈະເຮັດແນວໃດເພື່ອເພີ່ມເຕີມໃສ່ໃນສິ່ງທີ່ທ່ານເຮັດນັ້ນ.

ຕ້ອງແນ່ໃຈສະເໝີວ່າ ຂໍ້ມູນທີ່ທ່ານສົ່ງໄປດ້ວຍການໃຊ້ພາກສ່ວນຂອງຮ່າງກາຍ ແລະ ສີໜ້ານັ້ນ ແມ່ນຖືກຕ້ອງກັບສິ່ງທີ່ທ່ານສົ່ງໄປດ້ວຍພາສາຄຳເວົ້າ ຫຼື ສັນຍະລັກນັ້ນ. ຖ້າຂໍ້ຄວາມທີ່ສົ່ງໄປໂດຍການໃຊ້ສີໜ້າຫາກບໍ່ຕົງກັບພາສາຄຳເວົ້າຂອງທ່ານ, ລູກຂອງທ່ານເອງກໍ່ຈະສັບສົນ.




*ການສະແດງສີໜ້າຢາກຮ້າຍຂອງ ນາງ ມະໂຫທຳ, ແຕ່ລາວພັດສົ່ງຂໍ້ຄວາມເປັນພາສາຄຳເວົ້າທີ່ບໍ່ຕົງກັບສີໜ້າຂອງລາວ. ນີ້ຈະເປັນການເຮັດໃຫ້ສັບສົນ.*



# ຫຼຸດຜ່ອນພາວະວຸ້ນວາຍຈິດໃຈໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້

ພາວະວຸ້ນວາຍຈິດໃຈ ເຊັ່ນ: ການທີ່ເດັກຄົນອື່ນຫຼິ້ນຢູ່ໃກ້ກັບລູກຂອງທ່ານນັ້ນ ສາມາດສົ່ງຜົນການເຮັດກິດຈະກຳຂອງລູກທ່ານ ມີຄວາມຫຍຸ້ງຍາກຂຶ້ນ ຫຼື ເຮັດບໍ່ໄດ້ເລີຍ, ໃນກໍລະນີດັ່ງກ່າວນີ້ ທ່ານສາມາດຊ່ວຍໄດ້ ໂດຍການຊອກຫາສະຖານທີ່ທີ່ມີສິ່ງລົບກວນໜ້ອຍ ແລະ ພະຍາຍາມເອົາສຽງຕ່າງໆ ທີ່ບໍ່ຈຳເປັນອອກ. ຖ້າຫາກໃນຫ້ອງມີສິ່ງລົບກວນຫຼາຍ ກໍ່ຈະເຮັດໃຫ້ເດັກຜູ້ທີ່ບໍ່ສາມາດຮັບຟັງໄດ້ດີນັ້ນ ມີຄວາມຫຍຸ້ງຍາກທີ່ຈະເຂົ້າໃຈໃນສິ່ງທີ່ຄົນອື່ນເວົ້າອອກມາ.



*ພໍ່ຂອງເດັກຄົນນີ້ກຳລັງຈະປິດ ວິທະຍຸ ກ່ອນທີ່ເຂົາຈະຫຼິ້ນກັບລູກຂອງເຂົາ.*

# ດັດແປງກິດຈະກຳໃຫ້ເໝາະສົມກັບ ລູກຂອງທ່ານ

ບັນດາກິດຈະກຳທີ່ມີຢູ່ໃນປຶ້ມເຫຼັ້ມນີ້ ສາມາດຊ່ວຍໃຫ້ລູກຂອງທ່ານຮຽນຮູ້ການສື່ສານໄດ້. ແຕ່ພວກມັນເປັນພຽງຕົວຢ່າງທີ່ຊ່ວຍໃນການຮຽນຮູ້ຂອງເດັກເທົ່ານັ້ນ, ຈົ່ງສັງເກດເບິ່ງລູກຂອງທ່ານໃຫ້ລະອຽດວ່າ ເຂົາມີຄວາມສົນໃຈໃນສິ່ງໃດ ແລະ ເຮັດໃຫ້ເຂົາມີຄວາມຕ້ອງການຈະສື່ສານ, ພ້ອມທັງສັງເກດອີກວ່າ ແມ່ນສິ່ງໃດທີ່ເຮັດໃຫ້ເຂົາເສຍໃຈ ແລະ ເຮັດໃຫ້ເຂົາຢາກຢຸດການສື່ສານ. ຕໍ່ຈາກນັ້ນ ທ່ານກໍ່ສາມາດຄົ້ນຄິດເພື່ອຊອກຫາວິທີດັດແປງບັນດາກິດຈະກຳທີ່ຢູ່ໃນປຶ້ມເຫຼັ້ມນີ້, ແລ້ວກິດຈະກຳຕ່າງໆເຫຼົ່ານີ້ຈະໄດ້ຮັບຜົນດີ ແລະ ມີຄວາມເໝາະສົມກັບລູກຂອງທ່ານ. ພ້ອມກັນນັ້ນມັນກໍ່ຈະງ່າຍຂຶ້ນໃນການຈັດກິດຈະກຳປະຈຳວັນໃນຄອບຄົວຂອງທ່ານ.

ທ່ານຍັງສາມາດດັດປັບບັນດາກິດຈະກຳເຫຼົ່ານີ້ໃຫ້ເໝາະສົມກັບຄວາມອາດສາມາດຂອງລູກທ່ານ.

**ຕົວຢ່າງ:**

- ຖ້າຫາກເດັກສາມາດຍິນສຽງຄຳເວົ້າສ່ວນໃດສ່ວນໜຶ່ງ, ຈົ່ງຊ່ວຍເຂົາໃຫ້ຮຽນຮູ້ພາສາຄຳເວົ້າທີ່ງ່າຍດາຍເສຍກ່ອນໂດຍມີການເນັ້ນໜັກສຽງ ແລະ ເວົ້າຄືນບັນດາຄຳເວົ້າເຫຼົ່ານັ້ນ. ຕໍ່ມາກໍ່ໃຊ້ບັນດາຄຳສັບດັ່ງກ່າວນັ້ນເຂົ້າໃນຊີວິດປະຈຳວັນແຕ່ລະມື້.




- ຖ້າຫາກເດັກບໍ່ສາມາດໄດ້ຍິນສຽງພາສາຄຳເວົ້າໄດ້ດີພໍປານໃດ. ຈົ່ງສອນທຸກຄົນໃນບັນດາພາສາສັນຍະລັກຕ່າງໆ ເພື່ອທີ່ຈະໃຊ້ກັບເດັກຄົນນັ້ນ.




- ຖ້າລູກຂອງທ່ານຫາກສາມາດຮັບຮູ້ສຽງຕ່າງໆທີ່ຢູ່ອ້ອມຕົວເຂົານັ້ນ, ທຸກຄົນສາມາດຊ່ວຍເຮັດໃຫ້ເຂົາມີຄວາມສົນໃຈຕໍ່ບັນດາສຽງດັ່ງກ່າວນັ້ນໄດ້.



## ການຊ່ວຍເຫຼືອໃນການຈະເລີນເຕີບໂຕລູກຂອງທ່ານ

ຖ້າທ່ານຫາກປະຕິບັດບັນດາກິດຈະກຳເຫຼົ່ານີ້ ໃຫ້ກາຍເປັນພາກສ່ວນໜຶ່ງໃນຊີວິດປະຈຳວັນຂອງຄອບຄົວທ່ານແລ້ວ, ລູກຂອງທ່ານຈະມີຊີວິດໄວເດັກທີ່ເຕັມໄປດ້ວຍຄວາມສະໜຸກສະໜານ ແລະ ການຮຽນຮູ້. ເມື່ອເຂົາເຕີບໃຫຍ່ຂຶ້ນມາ ເຂົາຈະສາມາດ:



*ຮ່ວມການສິນທະນາຄອບຄົວໄດ້.*



*ພັດທະນາມິດຕະພາບກັບເດັກຄົນອື່ນໆໄດ້.*



*ພົບປະກັບບັນດາເດັກ ແລະ ຜູ້ໃຫຍ່ຄົນອື່ນ ທີ່ພິການທາງຫູ ຫຼື ບໍ່ສາມາດຮັບຟັງໄດ້ດີ.*



*ໄປໂຮງຮຽນ ແລະ ຮຽນຮູ້ເລື່ອງການຄິດໄລ່ໄດ້.*



*ແຕ່ງງານ ແລະ ມີຄອບຄົວເປັນຂອງຕົນເອງ, ນັບຈາກນີ້ເປັນຕົ້ນໄປ. ເຂົາເອງກໍ່ຈະສາມາດສົ່ງເສີມຄອບຄົວຂອງເຂົາ ແລະ ຢູ່ຮ່ວມກັບຊຸມຊົນໄດ້.*

ໃນຂະນະທີ່ທ່ານເຮັດກິດຈະກຳຕ່າງໆໃນປຶ້ມເຫຼັ້ມນີ້, ຈົ່ງພະຍາຍາມຄື:

- **ຕ້ອງອົດທົນ:** ເດັກນ້ອຍສາມາດໃສ່ໃຈໄດ້ພຽງແຕ່ 2-3 ນາທີເທົ່ານັ້ນຕໍ່ຄັ້ງ.
- **ຕ້ອງໃຫ້ມີຄວາມເບີກບານໃຈ:** ການຮຽນຮູ້ກິດຈະກຳ ຈະມີປະສິດທິພາບຫຼາຍຂຶ້ນ, ຖ້າຫາກກິດຈະກຳເຫຼົ່ານັ້ນຫາກມີຄວາມສະໜຸກສະໜານສຳລັບທ່ານທັງສອງຝ່າຍ.

ບໍ່ຕ້ອງໝົດກຳລັງໃຈ, ບໍ່ຄວນຄາດຫວັງໃຫ້ມີການປ່ຽນແປງພຶດຕິກຳຂອງເດັກຢ່າງທັນທີທັນໃດ, ລູກຂອງທ່ານຈະສາມາດຮຽນຮູ້ສິ່ງໃດສິ່ງໜຶ່ງຈາກແຕ່ລະບັນດາກິດຈະກຳ, ຖ້າທ່ານບໍ່ສັງເກດ ທ່ານເອງກໍ່ບໍ່ສາມາດຮັບຮູ້ໄດ້.

**ການທີ່ຈະເຮັດໃຫ້ການຮຽນຮູ້ ເປັນການຮຽນຮູ້ທີ່ສະໜຸກສະໜານນັ້ນຕ້ອງ:**

✓ *ມີຄວາມອົດທົນ.*
✓ *ປັບໄປໃນທິດທາງທີ່ດີຂຶ້ນ.*
✓ *ເປັນກິດຈະກຳທີ່ສັ້ນ.*

